ສາທາລະນະລັດ ປະຊາທິປະ ໄຕປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
☆☆☆☆☆☆☆☆☆☆☆

ທະນາຄານແຫ່ງສປປລາວ
ພາກເໜືອທີ່ແຂວງອຸດົມໄຊ

ເລກທີ.557../ ທຫລ.ອຊ
ອຸດົມໄຊ, ວັນທີ 23 SEP 2013

# ແຈ້ງການ

ເຖິງ: ບັນດາທ່ານຫົວໜ້າສາຂາທະນາຄານທຸລະກິດລັດ,ທະນາຄານເອກະຊົນ ແລະ ສະຖາບັນການເງິນທີ່ປະຈໍາຢູ່ 4 ແຂວງພາກເໜືອຕອນເທິງ.

ເລື່ອງ: ວັນເວລາການແຂ່ງຂັນກິລາເພື່ອຂໍ່ານັບຮັບຕ້ອນວັນສ້າງຕັ້ງ ທຫລ ຄົບຮອບ 45 ປີ.

ອີງຕາມ: ພາລະບົດບາດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ທຫລ.ອຊ ສະບັບເລກທີ່344/ທຫລ.ອຊ, ລົງວັນທີ 13/05/2008.

ອີງຕາມ: ແຈ້ງການເລກທີ 153 /ຫກ,ລົງວັນທີ 21 ພຶດສະພາ 2013 ວ່າດ້ວຍການສ້າງຂະບວນການຕ້ອນຮັບ ແລະ ສະເຫຼີມສະຫຼອງວັນສ້າງຕັ້ງທະນາຄານຄົບຮອບ 45ປີ.

ອີງໃສ່ : ການຄົ້ນຄ້ວາເຫັນດີເປັນເອກະພາບຂອງຄະນະສາຂາ,ຄະນະຮັບຜິດຊອບກິລາພາຍໃນ ທຫລ.ອຊຄັ້ງວັນທີ່ 20/09/2013 ວ່າດ້ວຍຄວາມເປັນເອກະພາບ ແລະ ຄວາມພ້ອມເພື່ອຮັບຮອງໃຫ້ການສ້າງຂະບວນການຄັ້ງນີ້ໃຫ້ມີບັນຍາກາດ ແລະ ເນື້ອໃນ.

ທະນາຄານແຫ່ງ ສປປ ລາວ ພາກເໜືອທີ່ແຂວງອຸດົມໄຊ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າການແຂ່ງຂັນກິລາແຕ່ລະປະເພດແມ່ນຈະໄດ້ຈັດຂຶ້ນທີ່ແຂວງອຸດົມໄຊ ສະໜາມບານເຕະແມ່ນຢູ່ໂຮງຮຽນເຕັກນິກ-ວິຊາຊີບແບບປະສົມ,ກິລາເປຕັງ ແລະ ດອກປີກໄກ່ແມ່ນຢູ່ເຮືອນພັກ ທຫລ.ອຊ,ບ້ານດອນໄຊ ໃນວັນທີ 5-7 ຕຸລາ 2013 ເພື່ອເຮັດໃຫ້ວຽກງານການສ້າງຂະບວນການຕ້ອນຮັບ ແລະ ສະເຫຼີມສະຫຼອງວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 45 ປີ ຄັ້ງນີ້ໃຫ້ເຕັມໄປດ້ວຍບັນຍາກາດຟົດຟື້ນ ແລະ ຄວາມສາມັກຄີພາຍໃນເປັນປຶກແຜ່ນຂອງລະບົບທະນາຄານ ແລະ ສະຖາບັນການເງິນຢ່າງກົມກຽວ,ພ້ອມທັງເປັນເຈົ້າການຈັດຕັ້ງໃນການປະກອບສ່ວນການສ້າງຂະບວນການບົນພື້ນຖານຈິດໃຈປະຢັດມັດທະຍັດ.(ໃຫ້ແຕ່ລະທະນາຄານທຸລະກິດ ແລະ ສະຖາບັນການເງິນແຈ້ງລາຍຊື່ຜູ້ທີ່ຈະເຂົ້າຮ່ວມງານສະເຫຼີມສະຫຼອງຄົບຮອບ 45 ປີຂອງທະນາຄານຕົນລວມທັງຄະນະຮັບຜິດຊອບກິລາ,ນັກກິລາ ແລະ ຄະນະສາຂາໃຫ້ຄະນະຮັບຜິດຊອບ ທຫລ.ອຊ ກ່ອນວັນທີ 25/09/2013).ລາຍລະອຽດມີຕາຕະລາງການແຂ່ງຂັນຄັດຕິດມາພ້ອມ.

ດັ່ງນັ້ນ,ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະຈັດຕັ້ງປະຕິບັດຕາມແຈ້ງການດ້ວຍ.

ຫົວໜ້າທະນາຄານແຫ່ງສປປລາວ
ພາກເໜືອທີ່ແຂວງອຸດົມໄຊ

ບຸນໄທ ສຸພັດທອນ
Bounthay SOUPHATHONE